ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 1005 - /ອຄ.ກພນ

ນະຄອນຫຼວງວຽງຈັນ, ວັນທີ 22 May 2015

# ຂໍ້ຕົກລົງ

# ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກໍາ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມດໍາລັດວ່າດ້ວຍທຸລະກິດຈໍາໜ່າຍສິນຄ້າ, ເລກທີ 206/ນຍ, ລົງວັນທີ 10 ຕຸລາ 2001;

**ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ :**

## ພາກທີ I

## ຫຼັກການທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການເຄື່ອນໄຫວດໍາເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, ເພື່ອຄຸ້ມຄອງການສ້າງຕັ້ງ, ການເຄື່ອນໄຫວໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍມີການຄຸ້ມຄອງຢ່າງລວມສູນ ຕາມກົນໄກເສດຖະກິດຕະຫຼາດ ທັງເປີດທາງສູ່ການແຂ່ງຂັນທີ່ເປັນທໍາ ຢ່າງແທ້ຈິງ, ຈັດສັນຢ່າງເປັນລະບົບ ແນໃສ່ ສ້າງຄວາມສະດວກ ແລະ ປົກປ້ອງຜູ້ຊົມໃຊ້, ສ້າງລາຍຮັບເຂົ້າງົບປະມານແຫ່ງລັດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດສັງຄົມຂອງຊາດ.

### ມາດຕາ 2 ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

ການຄ້າຂາຍຍົກ ແມ່ນ ການຈໍາໜ່າຍສິນຄ້າແບບຂາຍຍົກ ໃຫ້ບຸກຄົນ ຫຼື ນິຕິບຸກຄົນ ເພື່ອເອົາໄປຜະລິດຕໍ່, ຂາຍຍົກ ຫຼື ຂາຍຍ່ອຍຕໍ່.

ການຄ້າຂາຍຍ່ອຍ ແມ່ນ ການຈໍາໜ່າຍສິນຄ້າຂອດສຸດທ້າຍໃຫ້ ບຸກຄົນ ຫຼື ນິຕິບຸກຄົນ ເພື່ອຊົມໃຊ້.

**ມາດຕາ 3 ນະໂຍບາຍຂອງລັດຕໍ່ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ**

ລັດຊຸກຍູ້, ສົ່ງເສີມ ໃຫ້ບຸກຄົນ ແລະ ນິຕິບຸກຄົນ ພາຍໃນປະເທດ ດຳເນີນທຸລະກິດຂາຍຍົກ ແລະ ຂາຍຍ່ອຍ ດ້ວຍການວາງລະບຽບການ, ມາດຕະການ, ການສະໜອງຂໍ້ມູນຂ່າວສານ, ການບໍລິການ ແລະ ການເອື້ອອຳນວຍຄວາມສະດວກອື່ນໆທີ່ກ່ຽວຂ້ອງ.

ບຸກຄົນ ແລະ ນິຕິບຸກຄົນ ຕ່າງປະເທດ ສາມາດດຳເນີນທຸລະກິດ ການຄ້າຂາຍຍົກ ແລະ ຂາຍຍ່ອຍໄດ້ ແຕ່ຕ້ອງປະຕິບັດຕາມເງື່ອນໄຂ ທີ່ກຳນົດໃນຂໍ້ຕົກລົງສະບັບນີ້, ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 4 ຫຼັກການພື້ນຖານກ່ຽວກັບການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ**

ການເຄື່ອນໄຫວທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍຢູ່ ສປປ ລາວ ຕ້ອງປະຕິບັດຕາມຫຼັກການພື້ນຖານຕົ້ນຕໍດັ່ງນີ້:

1. ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງລັດ, ຜູ້ດຳເນີນທຸລະກິດຂາຍຍົກ-ຂາຍຍ່ອຍ ແລະ ຜູ້ຊົມໃຊ້;
2. ມີຄວາມໂປ່ງໃສໃນການດຳເນີນທຸລະກິດ ແລະ ຮັບປະກັນການແຂ່ງຂັນທີ່ເປັນທຳ;
3. ສອດຄ່ອງກັບກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ ຂອງ ສປປ ລາວ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດຂາຍຍົກ ແລະ ຂາຍຍ່ອຍຢູ່ ສປປ ລາວ.

## ພາກທີ II
## ຮູບການ, ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

### ໝວດທີ 1
### ຮູບການທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

**ມາດຕາ 6 ຮູບການທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ**

ຮູບການທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ປະກອບດ້ວຍ :

1. ຮູບການທົ່ວໄປ;
2. ຮູບການຕາມສັນຍາ;
3. ຮູບການຕົວແທນຈຳໜ່າຍ(Agent);
4. ຮູບການການຄ້າຂາຍຕໍ່ (Resell);
5. ຮູບການໄດ້ຮັບສິດທິນຳໃຊ້ (Franchise).

### ມາດຕາ 7 ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການທົ່ວໄປ

ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການທົ່ວໄປ ແມ່ນທຸລະກິດການຂາຍຜະລິດຕະພັນສິນຄ້າທີ່ຕົນຜະລິດໄດ້ ຫຼື ສິນຄ້າຂອງຜູ້ອື່ນ ໂດຍບໍ່ມີສັນຍາຜູກພັນ, ບໍ່ໄດ້ເປັນຕົວແທນ ຫຼື ໄດ້ຮັບສິດທິນຳໃຊ້.

ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍທົ່ວໄປ ຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ເວັ້ນເສຍແຕ່ບາງປະເພດທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍທີ່ກົດໝາຍ ແລະ ລະບຽບການກຳນົດເປັນຢ່າງອື່ນ.

### ມາດຕາ 8 ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການຕາມສັນຍາ

ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການຕາມສັນຍາ ແມ່ນທຸລະກິດຈຳໜ່າຍ ສິນຄ້າຕາມເງື່ອນໄຂທີ່ໄດ້ຕົກລົງກັນເປັນລາຍລັກອັກສອນ ແລະ ໄດ້ລະບຸໄວ້ໃນສັນຍາຊື້ - ຂາຍ ຢ່າງຈະແຈ້ງ ເປັນຕົ້ນ: ຈຳນວນ, ມາດຕະຖານ, ຊະນິດ, ຍີ່ຫໍ້, ວັນໝົດການົດ, ລາຄາ, ຮູບການຊຳລະເງິນ, ການຮັບປະກັນສິນຄ້າ ແລະ ເງື່ອນໄຂການສົ່ງສິນຄ້າຄືນ ແກ່ຜູ້ຜະລິດຕົ້ນທາງ ແລະ ອື່ນໆ.

ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການຕາມສັນຍາຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ ເວັ້ນເສຍແຕ່ໄດ້ມີທະບຽນວິສາຫະກິດດຳເນີນທຸລະກິດການຄ້າຂາຍຍົກ ຫຼື ຂາຍຍ່ອຍໃດໜຶ່ງແລ້ວ.

### ມາດຕາ 9 ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການເປັນຕົວແທນຈຳໜ່າຍ (Agent)

ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການເປັນຕົວແທນຈຳໜ່າຍແມ່ນທຸລະກິດ ຊື້-ຂາຍ ສິນຄ້າຊຶ່ງບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນຕົວແທນຈຳໜ່າຍນັ້ນ ດຳເນີນທຸລະກິດໃນນາມຂອງຕົນ ແຕ່ເຮັດເພື່ອຜົນປະໂຫຍດຂອງຜູ້ອື່ນບົນພື້ນຖານສັນຍາມອບໝາຍ ໂດຍໄດ້ຮັບຄ່າບຳເນັດ(Commission) ແລະ ຄ່າລາງວັນອື່ນໆ ເປັນການຕອບແທນ.

ການດຳເນີນທຸລະກິດເປັນຕົວແທນຈຳໜ່າຍ ຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງ ຕາມກົດໝາຍວ່າດ້ວຍວິສາຫະກິດ ເວັ້ນເສຍແຕ່ໄດ້ມີທະບຽນວິສາຫະກິດດຳເນີນທຸລະກິດການຄ້າຂາຍຍົກ ຫຼື ຂາຍຍ່ອຍໃດໜຶ່ງແລ້ວ.

### ມາດຕາ 10 ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການການຄ້າຂາຍຕໍ່ (Resell)

ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການການຄ້າຂາຍຕໍ່ແມ່ນ ທຸລະກິດຈຳໜ່າຍສິນຄ້າ ໃນນີ້ກວມເອົາການນຳເອົາສິນຄ້າຜະລິດ ແລະ ຈຳໜ່າຍຕໍ່ ເພື່ອຫວັງຜົນກຳໄລຈາກຜົດດ່ຽງລາຄາຊື້ ແລະ ລາຄາຂາຍສິນຄ້າ ໂດຍຜູ້ດຳເນີນທຸລະກິດການຄ້າຂາຍຕໍ່ນັ້ນ ເຮັດສັນຍາຊື້ແບບຂາດຕົວນຳເຈົ້າຂອງຍີ່ຫໍ້ສິນຄ້າ ເພື່ອຂາຍຕໍ່ ພາຍໃຕ້ຊັບສິນ, ເງິນທຶນ ແລະ ຮັບຜົນກຳໄລ ຫຼື ຮັບຜິດຊອບຕໍ່ການຂາດທຶນດ້ວຍຕົນເອງ ໂດຍຄູ່ສັນຍາບໍ່ມີພັນທະຕໍ່ກັນ ແລະ ກັນ, ເວັ້ນເສຍແຕ່ສັນຍາທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການການຄ້າຂາຍຕໍ່ຫາກກຳນົດໄວ້ເປັນຢ່າງອື່ນ.

ສັນຍາຊື້-ຂາຍສິນຄ້າລະຫວ່າງເຈົ້າຂອງຍີ່ຫໍ້ສິນຄ້າ ແລະ ຜູ້ຂາຍຕໍ່ຕ້ອງເຮັດເປັນລາຍລັກອັກສອນ ສອດຄ່ອງກັບກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາແຫ່ງ ສປປ ລາວ.

ການດຳເນີນທຸລະກິດການຄ້າຂາຍຕໍ່ ຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງ ຕາມກົດໝາຍວ່າດ້ວຍ ວິສາຫະກິດ ເວັ້ນເສຍແຕ່ໄດ້ມີທະບຽນວິສາຫະກິດການດຳເນີນທຸລະກິດການຄ້າຂາຍຍົກ ຫຼື ຂາຍຍ່ອຍ ໃດໜຶ່ງແລ້ວ.

**ມາດຕາ 11 ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການໄດ້ຮັບສິດທິນຳໃຊ້ (Franchise)**

ທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຮູບການໄດ້ຮັບສິດທິ ນຳໃຊ້ແມ່ນການມອບສິດທິນຳໃຊ້ ກ່ຽວກັບເຄື່ອງໝາຍການຄ້າຂອງສິນຄ້າ ລວມທັງວິທີການໃນການຈັດການຕະຫຼາດ ຈາກຜູ້ເປັນເຈົ້າຂອງສິດທິ ໃຫ້ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບສິດທິນຳໃຊ້ ເພື່ອຈຳໜ່າຍ ແລະ ໃຫ້ການບໍລິການໃນນາມຄືກັບ ທີ່ຕົນໄດ້ເປັນເຈົ້າຂອງສິດທິນັ້ນໆ.

ເຈົ້າຂອງສິດທິ ຈະໄດ້ຮັບຄ່ານຳໃຊ້ສິດທິດັ່ງກ່າວ ຈາກຜູ້ທີ່ໄດ້ຮັບສິດທິນຳໃຊ້ ເປັນການຕອບແທນ. ຄ່ານຳໃຊ້ສິດທິແມ່ນຂຶ້ນກັບການຕົກລົງກັນລະຫວ່າງເຈົ້າຂອງສິດທິ ແລະ ຜູ້ທີ່ໄດ້ຮັບສິດທິ.

ການດຳເນີນທຸລະກິດຮູບການໄດ້ຮັບສິດທິນຳໃຊ້ ຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງ ຕາມກົດໝາຍວິສາຫະກິດ ເວັ້ນເສຍແຕ່ໄດ້ມີທະບຽນວິສາຫະກິດດຳເນີນທຸລະກິດການຄ້າຂາຍຍົກ ຫຼື ຂາຍຍ່ອຍ ໃດໜຶ່ງແລ້ວ.

## ໝວດທີ 2
## ການສ້າງຕັ້ງ ທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

**ມາດຕາ 12 ການສ້າງຕັ້ງທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດມີສິດສ້າງຕັ້ງວິສາຫະກິດ ແລະ ເຂົ້າຮ່ວມດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ໂດຍສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 13 ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສຳລັບຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ (ບຸກຄົນ ຫຼື ນິຕິບຸກຄົນ) ສາມາດສ້າງຕັ້ງ ແລະ ດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ຢູ່ ສປປ ລາວໄດ້ຕາມເງື່ອນໄຂດັ່ງນີ້:

1. ສ້າງຕັ້ງ ແລະ ດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຕາມເງື່ອນໄຂທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍສູນການຄ້າ ແລະ ຮ້ານສັບພະສິນຄ້າ ທີ່ ກະຊວງອຸດສາຫະກຳ ແລະ ການຄ້າວາງອອກ;
2. ມີສະຖານທີ່ດຳເນີນທຸລະກິດ ທີ່ຕັ້ງຢູ່ສູນການຄ້າ ຫຼື ຮ້ານສັບພະສິນຄ້າ ຫຼື ສະຖານທີ່ ທີ່ລັດອະນຸມັດໃຫ້ສະເພາະຕາມແຕ່ລະກໍລະນີ;
3. ຕ້ອງມີທຶນຈົດທະບຽນ ແຕ່ 4 ຕື້ກີບຂຶ້ນໄປ;
4. ທຶນຈົດທະບຽນ ແຕ່ 20 ຕື້ກີບຂຶ້ນໄປ ສາມາດຖືຮຸ້ນໄດ້ 100%;
5. ທຶນຈົດທະບຽນຕໍ່າກວ່າ 20 ຕື້ກີບ ແຕ່ບໍ່ຫຼຸດ 4 ຕື້ກີບ ຕ້ອງຮຸ້ນສ່ວນກັບຜູ້ລົງທຶນພາຍໃນ ຕາມເງື່ອນໄຂດັ່ງນີ້:
    - ທຶນຈົດທະບຽນ ຕໍ່າກວ່າ 20 ຕື້ກີບ ແຕ່ບໍ່ຫຼຸດ 10 ຕື້ກີບ ສາມາດຖືຮຸ້ນໄດ້ສູງສຸດ ບໍ່ເກີນ 70%;
    - ທຶນຈົດທະບຽນ ຕໍ່າກວ່າ 10 ຕື້ກີບແຕ່ບໍ່ຫຼຸດ 04 ຕື້ກີບ ສາມາດຖືຮຸ້ນໄດ້ສູງສຸດ ບໍ່ເກີນ 50%;

**ມາດຕາ 14 ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ**

ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍຕ້ອງຍື່ນຕໍ່:

1. ເຈົ້າໜ້າທີ່ທະບຽນວິສາຫະກິດ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສຳລັບວິສາຫະກິດທີ່ມີຜູ້ລົງທຶນຕ່າງປະເທດຮ່ວມທຶນ ໃນທຶນຈົດທະບຽນແຕ່ 20 ຕື້ກີບ ຂຶ້ນໄປ;
2. ເຈົ້າໜ້າທີ່ທະບຽນວິສາຫະກິດຂອງພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ, ນະຄອນຫຼວງ:
   - ວິສາຫະກິດທີ່ມີຜູ້ລົງທຶນຕ່າງປະເທດຮ່ວມທຶນ ໃນທຶນຈົດທະບຽນຕໍ່າກວ່າ 20 ຕື້ກີບ;
   - ວິສາຫະກິດທີ່ຜູ້ລົງທຶນເປັນພົນລະເມືອງລາວ ຖືຫຸ້ນຮ້ອຍເປີເຊັນ (100%).

ກະຊວງອຸດສາຫະກຳ ແລະ ການຄ້າ ຈະມອບໝາຍສິດໃນການ ພິຈາລະນາຂຶ້ນທະບຽນວິສາຫະກິດເພີ່ມເຕີມຕາມເງື່ອນໄຂຄວາມພ້ອມຂອງພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ແລະ ເມືອງໃນແຕ່ລະໄລຍະ.

ການແບ່ງຄວາມຮັບຜິດຊອບ ໃນການບໍລິການຂຶ້ນທະບຽນວິສາຫະກິດ ໃນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ລະຫວ່າງພະແນກ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງເປັນຜູ້ຕົກລົງຕາມເງື່ອນໄຂຄວາມເປັນຈິງຂອງແຕ່ລະບ່ອນ.

**ມາດຕາ 15 ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ**

ການຍື່ນຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເພື່ອດຳເນີນການຄ້າຂາຍຍົກ ແລະ ຂາຍຍ່ອຍຕ້ອງ :

- ປະຕິບັດຕາມຂັ້ນຕອນການສ້າງ, ຮູບການ ຫລື ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ;
- ປະຕິບັດຕາມລະບຽບການກ່ຽວກັບແບບຟອມ, ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສຳລັບແຕ່ລະຮູບແບບ ຫຼື ຮູບການວິສາຫະກິດ;
- ປະກອບເອກະສານທີ່ຈຳເປັນ ຕາມເງື່ອນໄຂຂອງແຕ່ລະຮູບການທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ເຊັ່ນ: ໃບອະນຸຍາດນຳໃຊ້ສິດທິ, ສັນຍາຕົວແທນຈຳໜ່າຍ ເປັນຕົ້ນ.

## ໝວດທີ 3

## ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

**ມາດຕາ 16 ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂອງວິສາຫະກິດນຳເຂົ້າສິນຄ້າ**

ວິສາຫະກິດນຳເຂົ້າສິນຄ້າ ສາມາດດຳເນີນທຸລະກິດທັງຂາຍຍົກ ແລະ ຂາຍຍ່ອຍໃນສິນຄ້າ ທີ່ຕົນເອງນຳເຂົ້າມາ. ການອະນຸມັດໃຫ້ຂຶ້ນທະບຽນວິສາຫະກິດ ເພື່ອເຮັດທຸລະກິດນຳເຂົ້າສິນຄ້າ ກໍ່ແມ່ນການອະນຸຍາດໃຫ້ຂຶ້ນທະບຽນວິສາຫະກິດ ເພື່ອເຮັດທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ເວັ້ນເສຍແຕ່ການນຳເຂົ້າອຸປະກອນວັດຖຸດິບ, ພາຫະນະການຜະລິດເພື່ອສະໜອງໃຫ້ໂຮງງານ, ໂຄງການຕ່າງໆ.

ວິສາຫະກິດນຳເຂົ້າສິນຄ້າ ທີ່ຄົນລາວເປັນຜູ້ລົງທຶນຮ້ອຍເປີເຊັນ (100%) ສາມາດຈຳໜ່າຍຂາຍຍົກ ແລະ ຂາຍຍ່ອຍ ຜະລິດຕະພັນສິນຄ້ານຳເຂົ້າຂອງຕົນຕາມທີ່ບົ່ງໄວ້ໃນໃບທະບຽນວິສາຫະກິດ ໂດຍບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດ ການຄ້າຂາຍຍົກ ແລະ ຂາຍຍ່ອຍອີກ.

ທຸກຫົວໜ່ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ຕ້ອງມີບັນຊີຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ຖ້າຫົວໜ່ວຍທຸລະກິດດຽວຫາກດຳເນີນທັງທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ຕ້ອງຖືສອງບັນຊີຄື : ບັນຊີການຄ້າຂາຍຍົກ ແລະ ບັນຊີການຄ້າຂາຍຍ່ອຍ ໂດຍແຍກເປັນສອງບັນຊີຢ່າງລະອຽດຈະແຈ້ງ.

ທຸລະກິດການຄ້າຂາຍຍົກ ຈະນຳເຂົ້າສິນຄ້າຈາກຕ່າງປະເທດໄດ້ກໍ່ຕໍ່ເມື່ອໄດ້ຂຶ້ນທະບຽນວິສາຫະກິດ ກ່ຽວກັບການນຳເຂົ້າສິນຄ້າດັ່ງກ່າວເທົ່ານັ້ນ.

ສຳລັບທຸລະກິດການຄ້າຂາຍຍ່ອຍ ບໍ່ສາມາດນຳເຂົ້າສິນຄ້າຈາກຕ່າງປະເທດດ້ວຍຕົນເອງໄດ້.

### ມາດຕາ 17 ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂອງໂຮງງານ

ໂຮງງານທີ່ໄດ້ຂຶ້ນທະບຽນວິສາຫະກິດຢູ່ ສປປ ລາວ ສາມາດຈຳໜ່າຍຜະລິດຕະພັນຂອງຕົນ ໂດຍບໍ່ຈຳເປັນຕ້ອງຂຶ້ນທະບຽນວິສາຫະກິດຂາຍຍົກ ແລະ ຂາຍຍ່ອຍ.

ນອກຈາກຜະລິດຕະພັນ ທີ່ໂຮງງານຜະລິດໄດ້ ຫ້າມບໍ່ໃຫ້ຂາຍຜະລິດຕະພັນອື່ນປົນ. ໃນກໍລະນີລະເມີດ ແມ່ນເປັນການຈຳໜ່າຍສິນຄ້ານອກລະບົບ.

### ມາດຕາ 18 ຂອບເຂດຈຳນວນແຮງງານຕ່າງປະເທດ

ຈຳນວນແຮງງານຕ່າງປະເທດທີ່ປະກອບໃນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຕ້ອງປະຕິບັດຢ່າງເຂັ້ມງວດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແຮງງານ ແລະ ພັນທະໃນສົນທິສັນຍາສາກົນດ້ານການຄ້າທີ່ ສປປ ລາວ ຮັບຮອງ ຫຼື ເປັນພາຄີ.

ພະນັກງານຕ່າງໆໃນຮ້ານ ຫຼື ສະຖານທີ່ຈຳໜ່າຍ ລວມທັງຜູ້ຈຳໜ່າຍຂາຍຍົກ ແລະ ຂາຍຍ່ອຍ ຕ້ອງແມ່ນພົນລະເມືອງລາວ ເວັ້ນເສຍແຕ່ບາງກໍລະນີທີ່ກົດໝາຍ ແລະ ລະບຽບການ ກຳນົດເປັນຢ່າງອື່ນ.

### ມາດຕາ 19 ການໃຫ້ບໍລິການຈຳໜ່າຍສິນຄ້າ

ການໃຫ້ບໍລິການຈຳໜ່າຍສິນຄ້າຂອງຫົວໜ່ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍຕ້ອງປະຕິບັດໃຫ້ຖືກຕ້ອງຕາມວິທີການ ແລະ ຮູບການທີ່ລະບຽບກົດໝາຍໄດ້ກຳນົດໄວ້ ໃນນີ້ອາດຈະດຳເນີນການໂດຍຜ່ານວິທີການ ແລະ ຮູບການຕົ້ນຕໍດັ່ງນີ້ :

1. ຮ້ານຄ້າ ຫຼື ສະຖານທີ່ສະເພາະຂອງຕົນ ຫຼື ເຊົ່າເພື່ອຈຳໜ່າຍສິນຄ້າແບບຖາວອນ ;
2. ຮ້ານຄ້າ ຫຼື ສະຖານທີ່ຈຳໜ່າຍແບບຊົ່ວຄາວ ເຊັ່ນ: ຕະຫຼາດນັດ, ງານສົ່ງເສີມທີ່ມີການຈຳໜ່າຍສິນຄ້າຕ່າງໆ;
3. ການຈຳໜ່າຍສິນຄ້າແບບເຄື່ອນທີ່ ເຊັ່ນ: ນຳໃຊ້ຍານພະຫະນະ;
4. ຮ້ານຄ້າ ຫຼື ສະຖານທີ່ຈຳໜ່າຍສິນຄ້າແບບຖາວອນ ຢູ່ຕະຫຼາດ, ສູນການຄ້າ ແລະ ຮ້ານສັບພະສິນຄ້າ.

**ມາດຕາ 20 ສະຖານທີ່ຕັ້ງ ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ**

ສະຖານທີ່ຕັ້ງການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ຕ້ອງຕັ້ງຕາມການກຳນົດໄວ້ໃນແຜນຂອງຜັງເມືອງ ແລະ ເທດສະບານ ທີ່ເໝາະສົມ ແລະ ອຳນວຍຄວາມສະດວກໃຫ້ລູກຄ້າມີສະຖານທີ່ຄ່ຽນຖ່າຍສິນຄ້າ, ມີບ່ອນຈອດລົດ ແລະ ຮັບປະກັນຄວາມປອດໄພໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ III
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມສຳລັບອົງການຄຸ້ມຄອງທີ່ກ່ຽວຂ້ອງ**

ໃນການປະຕິບັດໜ້າທີ່ຫ້າມອົງການຄຸ້ມຄອງທີ່ກ່ຽວຂ້ອງມີພຶດຕິກຳດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ບັງຄັບ, ນາບຂູ່ ເຊັ່ນ: ໃຊ້ຄວາມຮຸນແຮງ, ວາຈາທີ່ບໍ່ສຸພາບ ແລະ ເຈດຕະນາເຮັດໃຫ້ແກ່ຍາວເວລາ;
3. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
4. ປິດບັງ, ປົກປ້ອງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທຳຄວາມຜິດ;
5. ເປີດເຜີຍຄວາມລັບທຸລະກິດໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
6. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 22 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ ການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ**

ຫ້າມຜູ້ດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍມີພຶດຕິກຳດັ່ງນີ້:

1. ກະທຳການໃດໆໂດຍເຈດຕະນາ ຊຶ່ງເຮັດໃຫ້ລາຄາຕ່ຳ ຫລື ສູງເກີນຄວາມເປັນຈິງ ຫລືເຮັດໃຫ້ເກີດຄວາມປັ່ນປ່ວນໃນສັງຄົມ;
2. ກັກຕຸນສິນຄ້າທີ່ນອນໃນລາຍການຄວບຄຸມລາຄາ;
3. ເກັບມ້ຽນສິນຄ້າໄວ້ໃນຄັງແຮສຳຮອງອື່ນນອກຈາກຄັງແຮສຳຮອງທີ່ໄດ້ລາຍງານຕໍ່ອົງການຄຸ້ມຄອງລາຄາ;
4. ນຳເອົາສິນຄ້າທີ່ຢູ່ໃນລາຍການຄວບຄຸມລາຄາ ທີ່ມີໄວ້ນັ້ນ ອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ;
5. ຢຸດ, ປະຕິເສດ ຫລືແກ່ຍາວເວລາການຈຳໜ່າຍ ຫລື ບໍລິການ ໂດຍບໍ່ມີເຫດຜົນ;
6. ເອົາໃບທະບຽນວິສາຫະກິດໃຫ້ບຸກຄົນອື່ນນຳໃຊ້;
7. ຂາຍສິນຄ້າທີ່ບໍ່ຕິດສະຫຼາກ, ບໍ່ມີໃບແນະນຳສິນຄ້າ ແລະ ກຳໜົດເວລາໝົດອາຍຸນຳໃຊ້;
8. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 23 ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນມີພຶດຕິກຳດັ່ງນີ້:

1. ສ້າງອຸປະສັກກີດຂວາງການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງໃນການປະຕິບັດວຽກງານຄຸ້ມຄອງການຄ້າຂາຍຍົກ ແລະ ຂາຍຍ່ອຍ ;

2. ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ກະທຳຜິດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;

3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນເພື່ອສິດຜົນປະໂຫຍດຂອງຕົນ;

4. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ IV

## ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

### ມາດຕາ 24 ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ

ກະຊວງອຸດສາຫະກຳ ແລະ ການຄ້າເປັນອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ.

ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍແຕ່ສູນກາງ ລົງຮອດທ້ອງຖິ່ນປະກອບມີ 3 ຂັ້ນຄື:

- ຂັ້ນສູນກາງ ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ໂດຍແມ່ນກົມການຄ້າພາຍໃນເປັນຜູ້ຄຸ້ມຄອງ;
- ຂັ້ນແຂວງ ແມ່ນພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
- ຂັ້ນເມືອງ ແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.

### ມາດຕາ 25 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂັ້ນສູນກາງ

ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂັ້ນສູນກາງມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ນິຕິກຳ ແລະ ມາດຕະການໃນການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ;
2. ວິເຄາະ,ວິໄຈກ່ຽວກັບການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ລວມທັງສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງ;
3. ກຳນົດລະບຽບການ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດການຄຸ້ມຄອງ;
4. ເຜີຍແຜ່, ແນະນຳການຈັດຕັ້ງປະຕິບັດວຽກງານທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເປັນໃຈກາງໃນການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;
5. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ;
6. ຕິດຕາມ, ກວດກາ, ສະຫຼຸບ, ລາຍງານ ແລະ ສະເໜີກ່ຽວກັບການຈັດຕັ້ງປະຕິບັດ ການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຕໍ່ຂັ້ນເທິງ;
7. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະ ອື່ນໆຕາມການມອບໝາຍຂອງຂັ້ນເທິງ;
8. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍຂັ້ນແຂວງ**

ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂັ້ນແຂວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ວິເຄາະ ແລະ ວິໄຈກ່ຽວກັບການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍລວມທັງສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງ;
2. ຊີ້ນຳ, ນຳພາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ປະສານສົມທົບກັບພະແນກການ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ;
3. ຈັດຕັ້ງປະຕິບັດຄຸ້ມຄອງການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍຕາມ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
4. ເຜີຍແຜ່, ແນະນຳ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ;
5. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະ ອື່ນໆ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;
6. ຕິດຕາມພຶດຕິກຳຂອງຜູ່ດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ;
7. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ່ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ສະຫຼຸບ, ລາຍງານ ແລະ ສະເໜີກ່ຽວກັບການຈັດຕັ້ງປະຕິບັດຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ), ຫ້ອງວ່າການປົກຄອງແຂວງ, ນະຄອນຫຼວງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 27 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂັ້ນເມືອງ**

ອົງການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຂັ້ນເມືອງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່, ແນະນຳຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ສັງຄົມໄດ້ຮັບຮູ້ຢ່າງທົ່ວເຖິງ;
2. ຈັດຕັ້ງປະຕິບັດການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ;
3. ຕິດຕາມພຶດຕິກຳຂອງຜູ່ດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ;
4. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ່ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ການດຳເນີນທຸລະກິດການຄ້າຂາຍຍົກ ແລະ ຂາຍຍ່ອຍ;
5. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະ ອື່ນໆຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ;
6. ສະຫຼຸບ, ລາຍງານ ແລະ ສະເໜີກ່ຽວກັບການຈັດຕັ້ງປະຕິບັດ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແລະ ອົງການປົກຄອງເມືອງ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫຼື ໄດ້ຮັບນະໂຍບາຍຕາມຄວາມເໝາະສົມ.

**ມາດຕາ 29 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ VI

## ບົດບັນຍັດສຸດທ້າຍ

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດກະຊວງອຸດສາຫະກໍາ ແລະ ການຄ້າ, ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ວິສາຫະກິດຂອງຜູ້ລົງທຶນຕ່າງປະເທດທີ່ລົງທຶນຮ້ອຍເປີເຊັນ (100%) ຫຼື ລົງທຶນຮ່ວມກັບຜູ້ລົງທຶນຂອງລາວທີ່ໄດ້ຂຶ້ນທະບຽນວິສາຫະກິດດໍາເນີນທຸລະກິດການຄ້າຂາຍຍົກ ຫຼື ຂາຍຍ່ອຍ ກ່ອນປະກາດໃຊ້ຂໍ້ຕົກລົງສະບັບນີ້ສາມາດສືບຕໍ່ດໍາເນີນທຸລະກິດຂອງຕົນເອງໄດ້ ແຕ່ຕ້ອງໄດ້ປັບປຸງວິສາຫະກິດຂອງຕົນໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ພາຍໃນກໍານົດຄື:

- 03 ປີ ສໍາລັບທຶນຈົດທະບຽນ ແຕ່ 20 ຕື້ ກີບ ຂຶ້ນໄປ;
- 02 ປີ ສໍາລັບທຶນຈົດທະບຽນ ຕໍ່າກວ່າ 20 ຕື້ ກີບ ແຕ່ ບໍ່ຫລຸດ 10 ຕື້ ກີບ;
- 01 ປີ ສໍາລັບທຶນຈົດທະບຽນ ຕໍ່າກວ່າ 10 ຕື້ ກີບ ແຕ່ບໍ່ຫລຸດ 04 ຕື້ ກີບ.

ຖ້າກາຍກໍານົດເວລາດັ່ງກ່າວແມ່ນຈະໄດ້ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ຫຼັງຈາກ 15 ວັນນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ ;

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງວ່າດ້ວຍ ທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 0977/ອຄ.ຄພນ, ລົງວັນທີ 18 ພຶດສະພາ 2012.

ລັດຖະມົນຕີວ່າການ

ກະຊວງອຸດສາຫະກໍາ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ